ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ

ຫ້ອງການ

ເລກທີ 611 /ຫກ

ນະຄອນຫຼວງວຽງຈັນ, ວັນທີ 23 ມີນາ 2025

# ໜັງສືແຈ້ງເຊີນປະມູນ ລົມທຽບລາຄາ

1. ກະຊວງສຶກສາທິການ ແລະ ກິລາ ຂໍຖືເປັນກຽດຮຽນເຊີນບັນດາບໍລິສັດ, ຫ້າງຮ້ານ ທີ່ສົນໃຈ ແລະ ມີຄຸນວຸດທິທີ່ເໝາະສົມ ເຂົ້າຍື່ນຊອງປະມູນສໍາລັບການຈັດຊື້ ປີ້ຍົນ ເດີນທາງໄປ-ກັບ ນະຄອນຫຼວງວຽງຈັນ-ຈາກາຕ້າ ປະເທດ ອິນໂດເນເຊຍ ຈໍານວນ 02 ປີ້, ເພື່ອສົ່ງຄູຝຶກ ແລະ ກໍາມະການຕັດສິນກິລາ ຢູໂດ ເຂົ້າຮ່ວມການສໍາມະນາ IJF 2025 New Rules Semimar ລະຫວ່າງວັນທີ 14 ຫາ 17 ເດືອນ ເມສາ 2025 ໄລຍະເວລາການຈັດສົ່ງພາຍໃນ 07 ວັນ ພາຍຫຼັງທີ່ເຊັນສັນຍາ.
2. ການປະມູນຈະດໍາເນີນຕາມຂັ້ນຕອນການປະມູນລົມທຽບລາຄາ ທີ່ໄດ້ກໍານົດໄວ້ໃນ ກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄໍາແນະນໍາກ່ຽວກັບການຈັດຕັ້ງປະຕິບັດກົດໝາຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ຂອງກະຊວງການເງິນ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ບໍລິສັດ ທີ່ມີຄຸນນະວຸດທິເໝາະສົມ ສົນໃຈສາມາດຕິດຕໍ່ພົວພັນ ແລະ ເຂົ້າເບິ່ງເອກະສານປະມູນທີ່ ພະແນກຄຸ້ມຄອງຊັບສິນຂອງລັດ, ກົມການເງິນ, ກະຊວງສຶກສາທິການ ແລະ ກິລາ ໂທລະສັບ/ແຟັກ: 021 217 206 ຕາມວັນເວລາ ລັດຖະການ;
4. ເອກະສານປະມູນຄົບຊຸດທີ່ເປັນພາສາລາວ ຜູ້ທີ່ສົນໃຈປະມູນ ສາມາດຍື່ນ ໜັງສືສະເໜີຫາ ຫຼື ສາມາດສອບຖາມລາຍລະອຽດໄດ້ທີ່ ພະແນກຄຸ້ມຄອງຊັບສິນຂອງລັດ, ກົມການເງິນ, ກະຊວງສຶກສາທິການ ແລະ ກິລາ, ຖະໜົນເລກ 1 ລ້ານຊ້າງ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ໂທລະສັບ/ແຟັກ: 021 217 206, ເລີ່ມແຕ່ວັນທີ 27 ມີນາ ຫາ 07 ເມສາ 2025 ຕາມວັນເວລາລັດຖະການ;
5. ຊອງປະມູນຕ້ອງສົ່ງທີ່ຫ້ອງປະຊຸມ 425 ກະຊວງສຶກສາທິການ ແລະ ກິລາ ກ່ອນເວລາ 10:00 ໂມງ ຂອງ ວັນທີ 07 ເມສາ 2025. ຈະບໍ່ອະນຸຍາດສົ່ງຊອງປະມູນມາທາງເອເລັກໂຕຼນິກ, ຊອງປະມູນທີ່ສົ່ງຊ້າກ່ອນເວລາທີ່ກໍານົດໄວ້ ຈະບໍ່ຮັບເອກສານປະມູນ ແລະ ສົ່ງຄືນ ໂດຍບໍ່ມີການເປີດຊອງ, ຊອງປະມູນທຸກໆຊອງ ຈະໄດ້ເປີດໃນເວລາ 10:00 ໂມງ ຂອງວັນທີ 07 ເມສາ 2025 ໂດຍຊ່ອງໜ້າຄະນະກໍາມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມ;
6. ທຸກໆຊອງປະມູນຕ້ອງໄດ້ປະກອບໜັງສືຄໍ້າປະກັນການປະມູນດ້ວຍກຽດ ຫຼື ໜັງສືຄໍ້າປະກັນການປະມູນຈາກທະນາຄານ ຊຶ່ງມູນຄ່າການຄໍ້າປະກັນບໍ່ໃຫ້ຫຼຸດ 2% (ສອງສ່ວນຮ້ອຍ) ຂອງລາຄາປະມູນມາພ້ອມ.

ຫົວໜ້າຫ້ອງການ

ພົນມະແສງ ທິບພະວົງ